ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 10 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 05 ພະຈິກ 2018

ສຳນັກງານ ຄຄຊ
ເລກທີ 1158
ວັນທີ 08 NOV 2018
ໂທລະສັບ 021 217770

## ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ ກັນຍາ ປີ 2018 ແລະ ທິດທາງແຜນການເດືອນຕໍ່ໄປ

## ພາກທີ I
## ຕີລາຄາສະພາບການເຄື່ອນໄຫວວຽກງານທີ່ພົ້ນເດັ່ນຂອງ ທຫລ ໃນໄລຍະຜ່ານມາ

### I. ວຽກງານການເມືອງ-ແນວຄິດ

ໃນໜຶ່ງເດືອນຜ່ານມາ, ສະພາບການເມືອງແນວຄິດຂອງສະມາຊິກພັກ-ພະນັກງານພາຍໃນຂະແໜງທະນາຄານ ມີຄວາມສະຫງົບປົກກະຕິ, ມີຄວາມອຸ່ນອ່ຽນທຸ່ນທ່ຽງ, ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ-ລະບຽບວິໄນ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກ ແລະ ເອົາໃຈໃສ່ໃນການປະຕິບັດໜ້າທີ່ການເມືອງຂອງຕົນໄດ້ເປັນຢ່າງດີ ຊຶ່ງສາມາດສະຫຼຸບຕີລາຄາສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ ປະຈຳເດືອນ ກັນຍາ 2018 ແລະ ທິດທາງແຜນການໃນເດືອນ ຕຸລາ 2018 ດັ່ງລາຍລະອຽດລຸ່ມນີ້:

### II. ສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ

– ໄດ້ເຂົ້າຮ່ວມກອງປະຊຸມຕ່າງໆ: ກອງປະຊຸມລາຍງານສະຫຼຸບຕີລາຄາການນຳພາຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ III ຂອງອົງຄະນະພັກ ທຫລ ໃນໄລຍະເຄິ່ງສະໄໝ ຕໍ່ຫ້ອງວ່າການສູນກາງພັກ; ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ປະຈຳເດືອນ ກັນຍາ 2018; ກອງປະຊຸມປຶກສາຫາລືກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດປີ 2019; ກອງປະຊຸມກວດກາຄືນເນື້ອໃນຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ); ກອງປະຊຸມ ສຳມະນາສະຫຼຸບບົດລາຍງານການປະເມີນຄວາມສ່ຽງລະດັບຊາດຕ້ານການຟອກເງິນ; ກອງປະຊຸມປຶກສາຫາລືກ່ຽວກັບການຄົ້ນຄວ້າບັນຫາເງິນດິຈິຕອນແບບໃສ່ລະຫັດ; ເຂົ້າຮ່ວມບຳລຸງທິດສະດີການເມືອງ 15 ວັນ ຢູ່ ສປ.ຈີນ; ເຂົ້າຮ່ວມລົງນາມ ແລະ ໄຫວ້ອາໄລຕໍ່ອາດີດ ປະທານປະເທດ ແຫ່ງ ສ.ສ ຫວຽດນາມ;

– ສຳເລັດການຈັດກອງປະຊຸມຕ່າງໆ: ກອງປະຊຸມເຊື່ອມຊຶມເອກະສານສຳຄັນຂອງຊາດ, ຂອງພັກ ແລະ ຂະແໜງການກ່ຽວຂ້ອງ; ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ II ປະຈຳປີ 2018; ກອງປະຊຸມຄະນະຊີ້ນຳລວມຊຸກຍູ້ພັນທະບັດລັດຖະບານເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ; ກອງປະຊຸມປຶກສາຫາກ່ຽວກັບການກຳນົດລາຄາສະເພາະຂອງຕະຫຼາດຫຼັກຊັບລາວ; ກອງປະຊຸມປຶກສາຫາລືກ່ຽວກັບການໃຫ້ບໍລິການຮັບຊຳລະສິນຄ້າ ແລະ ບໍລິການຜ່ານລະບົບ Alipay ໂດຍນຳໃຊ້ QR Code ຂອງບໍລິສັດ ກີວີ; ເຜີຍແຜ່ການນຳໃຊ້ລະບົບໂປຼແກຼມດຳເນີນທຸລະກຳໃນຕະຫຼາດ ແບບທັນສະໄໝ;

– ສຳເລັດການຕ້ອນຮັບການເຂົ້າຢ້ຽມຢາມພົບປະຄະນະນຳ ທຫລ ຂອງຜູ້ຕາງໜ້າຈາກອົງການ ກອງທຶນການພັດທະນາທຶນຂອງສະຫະປະຊາຊາດ (UNCDF) ແລະ ຊ່ຽວຊານຈາກປະເທດ ສປ. ຈີນ;

– ຈັດຕັ້ງ ແລະ ເຂົ້າຮ່ວມພິທີຕ່າງໆ: ຈັດພິທີມອບ-ຮັບຕຳແໜ່ງຂອງການນຳຂັ້ນສູງຂອງ ທຫລ; ຈັດພິທີຖະແຫຼງຂ່າວ ການກະກຽມສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 50 ປີ; ຈັດການແຂ່ງຂັນກິລາບານເຕະ, ກິລາມ່ອນຊີນ ແລະ ການແຂ່ງຂັນສິລະປະຮອບຊີງຊະນະເລີດ; ຈັດການແຂ່ງຂັນນັບເງິນ; ຈັດສຳມະນາໃນຫົວຂໍ້: "ມາດຕະຖານສາກົນດ້ານການລາຍງານການເງິນ IFRS 9 ແລະ ມາດຕະຖານການບັນຊີສາກົນ IAS 39";

– ກະກຽມເງື່ອນໄຂຮອບດ້ານໃນການສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 50 ປີ.

**III. ສະພາບພົ້ນເດັ່ນການເຄື່ອນໄຫວອວຽກງານວິຊາສະເພາະ**

ໃນ 1 ເດືອນຜ່ານມາ, ທະນາຄານແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ຕິດຕາມສະພາບເສດຖະກິດສາກົນ; ຕະຫຼາດເງິນຕາພາຍໃນ; ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ; ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ; ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບຢ່າງເປັນປົກກະຕິ ໂດຍມີສະພາບຄ່ອງດີ ເຊິ່ງສະແດງອອກຄື:

1. **ສະພາບເສດຖະກິດເງິນຕາສາກົນ**

– ໃນເດືອນ 09/2018 ສະພາບເສດຖະກິດໂລກໂດຍລວມມີແນວໂນ້ມທີ່ຂະຫຍາຍຕົວດີຕໍ່ເນື່ອງ ຈາກການຂະຫຍາຍຕົວດີຂອງການຄ້າໂລກ ແລະ ໄດ້ຮັບການສະໜັບສະໜູນຈາກນະໂຍບາຍກະຕຸ້ນເສດຖະກິດຂອງ ສ. ອາເມລິກາ ເຖິງແມ່ນວ່າ ຈະມີຄວາມຂັດແຍ້ງທາງດ້ານການຄ້າລະຫວ່າງ ສ. ອາເມລິກາ ແລະ ປະເທດຄູ່ຄ້າຫຼັກກໍຕາມ.

– ສຳລັບອັດຕາແລກປ່ຽນ: ເງິນໂດລາແຂງຄ່າຂຶ້ນ 0,59% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງ ສ. ອາເມລິກາ ອອກມາດີ ເປັນຕົ້ນແມ່ນ ຕົວເລກດັດຊະນີຄວາມເຊື່ອໝັ້ນຂອງຜູ້ບໍລິໂພກ ຂອງເດືອນ 8/2018 ຢູ່ທີ່ລະດັບ 133,4 ຈຸດ ຈາກລະດັບ 127,4 ຈຸດ ໃນເດືອນຜ່ານມາ. ພ້ອມນັ້ນ, ໃບອະນຸຍາດການກໍ່ສ້າງ ແລະ ຕົວເລກດັດຊະນີຂະແໜງການຜະລິດ ເພີ່ມຂຶ້ນຢູ່ໃນລະດັບ 1,5% ຈາກ 0,7% ແລະ ເພີ່ມຂຶ້ນຢູ່ທີ່ລະດັບ 61,3 ຈຸດ ຈາກ 58,1 ຈຸດ ໃນເດືອນຜ່ານມາ ຕາມລຳດັບ.

– ໃນດ້ານລາຄານໍ້າມັນຫຼຸດລົງ 0,63% ຈາກ 68,56 ໂດລາ/ບາເຣວ ມາເປັນ 68,13 ໂດລາ/ບາເຣວ ເນື່ອງຈາກປະລິມານການຜະລິດນໍ້າມັນດິບຂອງປະເທດລີເບຍ ຄາດຄະເນວ່າຈະເພີ່ມຂຶ້ນ ຈາກລະດັບ 664.000 ບາເຣວ/ວັນ ໃນເດືອນ 7/2018 ມາເປັນ 900.000 ບາເຣວ/ວັນ ໃນໄວໆນີ້ ພາຍຫຼັງທີ່ແຫຼ່ງຜະລິດນໍ້າມັນດິບ Sharara ແລະ ທ່າເຮືອສົ່ງອອກນໍ້າມັນດິບຫຼັກໆຂອງປະເທດສາມາດກັບຄືນມາດຳເນີນງານໄດ້ຢ່າງເປັນປົກກະຕິ.ສ່ວນດ້ານລາຄາຄຳຫຼຸດລົງ 2,00% ຈາກ 1.220,57 ໂດລາ/ອອນ ມາເປັນ 1.196,20 ໂດລາ/ອອນ ເນື່ອງຈາກການແຂງຄ່າຂອງເງິນໂດລາ ເຮັດໃຫ້ນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກັງກຳໄລ.

2. **ສະພາບເງິນຕາພາຍໃນ**

– ອັດຕາເງິນເຟີ້ປະຈຳເດືອນ 09/2018 (ຕົວເລກຄາດຄະເນ) ຢູ່ໃນລະດັບ 2,80% ເພີ່ມຂຶ້ນຈາກ 2,44% ໃນເດືອນຜ່ານມາ. ສາເຫດຍ້ອນການເພີ່ມຂຶ້ນຂອງລາຄາໝວດສະບຽງອາຫານ, ເຄື່ອງດື່ມທີ່ບໍ່ແມ່ນເຫຼົ້າ, ໝວດຄົມມະນາຄົມ ແລະ ການຂົນສົ່ງ.

– ຖານເງິນຕາປະຈຳເດືອນ 09/2018 ເພີ່ມຂຶ້ນ 890,82 ຕື້ກີບ ຫຼື 2,19% ທຽບໃສ່ເດືອນ 08/2018, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 3.187,90 ຕື້ກີບ ຫຼື 8,31%. ປະລິມານເງິນ M2 ເພີ່ມຂຶ້ນ 137,03 ຕື້ກີບ ຫຼື 0,16% ທຽບໃສ່ເດືອນ 08/2018, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8.348,73 ຕື້ກີບ ຫຼື 10,96%.

– ອັດຕາແລກປ່ຽນທົ່ວລະບົບໃນເດືອນ 09/2018 ທຽບເດືອນ 08/2018 ເໜັງຕີງໃນຂອບທີ່ກຳນົດໄວ້ ຊຶ່ງເຫັນໄດ້ຈາກເງິນກີບອ່ອນຄ່າລົງ 0,73% ທຽບເງິນໂດລາ ແລະ ອ່ອນຄ່າລົງ 1,92% ທຽບເງິນບາດ. ຖ້າສົມທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 3,85% ທຽບກັບເງິນໂດລາ ແລະ ອ່ອນຄ່າລົງ 3,85% ທຽບເງິນບາດ.

– ມູນຄ່າການຊື້-ຂາຍເງິນຕາຕ່າງປະເທດປະຈຳເດືອນ 09/2018 (13/08/2018-13/09/2018) ເຫັນວ່າມູນຄ່າການຊື້-ຂາຍເງິນຕາຕ່າງປະເທດເພີ່ມຂຶ້ນ 13,82% ຖ້າທຽບໃສ່ເດືອນ 08/2018. ທທກ ຂາຍເງິນຕາຕ່າງປະເທດສຸດທິ 52,92 ລ້ານໂດລາສະຫະລັດທຽບເທົ່າ (ໃນນັ້ນ, ຂາຍບາດສຸດທິ 1333,05 ລ້ານບາດ ຫຼື ທຽບເທົ່າ 42,10 ລ້ານໂດລາສະຫະລັດທຽບເທົ່າ ແລະ ຂາຍເງິນໂດລາສຸດທິ 10,82 ລ້ານໂດລາ). ໃນຂະນະດຽວກັນ, ທຫລ ໄດ້ດຸ່ນດ່ຽງໃຫ້ ທທກ ໂດຍຂາຍເງິນຕາຕ່າງປະເທດ ສຸດທິ 65,72 ລ້ານໂດລາສະຫະລັດທຽບເທົ່າ (ໃນນັ້ນ, ຂາຍໂດລາສຸດທິ 48,54 ລ້ານໂດລາ ແລະ ຂາຍບາດ ສຸດທິ 543,89 ລ້ານບາດ ຫຼື 17,18 ລ້ານໂດລາສະຫະລັດທຽບເທົ່າ);

– ສະພາບການໄຫຼຂອງກະແສເງິນຜ່ານລະບົບທະນາຄານ ປະຈຳເດືອນ 09/2018 (13/08/2018-12/09/2018) ໄດ້ມີກະແສເງິນໄຫຼອອກຜ່ານລະບົບທະນາຄານສຸດທິ 36,04 ລ້ານໂດລາ. ໃນນັ້ນ, ກະແສເງິນໄຫຼອອກຜ່ານລະບົບທະນາຄານ ຈຳນວນ 607,82 ລ້ານໂດລາ ຕົ້ນຕໍແມ່ນຊຳລະຄ່ານຳເຂົ້າສິນຄ້າ ຈຳນວນ 440,91 ລ້ານໂດລາ, ຊຳລະຄ່າບໍລິການ ຈຳນວນ 59,50 ລ້ານໂດລາ, ລາຍຈ່າຍອື່ນໆ ຈຳນວນ 55,59 ລ້ານໂດລາ ແລະ ຊຳລະເງິນກູ້ຫົວໜ່ວຍທຸລະກິດ ຈຳນວນ 19,11 ລ້ານໂດລາ. ສ່ວນກະແສເງິນໄຫຼເຂົ້າ ຈຳນວນ 571,78 ລ້ານໂດລາ ຊຶ່ງສ່ວນໃຫຍ່ແມ່ນຮັບເງິນຈາກການສົ່ງອອກສິນຄ້າ ຈຳນວນ 294,54 ລ້ານໂດລາ, ຮັບຈາກການບໍລິການ ຈຳນວນ 124,63 ລ້ານໂດລາ ແລະ ຮັບຈາກການລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 98,09 ລ້ານໂດລາ.

## 3. ການລະດົມເງິນຝາກ ແລະ ການປ່ອຍສິນເຊື່ອ

– ການລະດົມເງິນຝາກຂອງທະນາຄານທຸລະກິດ: ຮອດວັນທີ 13/09/2018 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 73.845,93 ຕື້ກີບ ເມື່ອທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 0,24% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 11,42%. ເງິນຝາກເປັນເງິນກີບ ເພີ່ມຂຶ້ນ 1,09% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 45,33% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດ ຫຼຸດລົງ 0,47% ຊຶ່ງກວມເອົາ 54,67% ຂອງເງິນຝາກທັງໝົດ;

– ການປ່ອຍສິນເຊື່ອຂອງທະນາຄານທຸລະກິດ: ຮອດວັນທີ 13/09/2018 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 67. 810,84 ຕື້ກີບ ເພີ່ມຂຶ້ນ 0,83% ເມື່ອທຽບໃສ່ເດືອນຜ່ານມາ. ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 4,97%. ສິນເຊື່ອເປັນເງິນກີບກວມເອົາ 48,07% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາຕ່າງປະເທດ ກວມເອົາ 51,93% ຂອງສິນເຊື່ອທັງໝົດ;

– ທະນາຄານນະໂຍບາຍປ່ອຍສິນເຊື່ອທັງໝົດໃນເດືອນ 09/2018 ຈຳນວນ 59,28 ຕື້ກີບ ທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 93,47%, ເກັບຕົ້ນທຶນໄດ້ 19,50 ຕື້ກີບ ທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 5,29 % (ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ). ຍອດສິນເຊື່ອຮອດທ້າຍເດືອນ 09/2018 ມີຈຳນວນ 3.135,49 ຕື້ກີບ ເທົ່າກັບ 99,82% ຂອງແຜນການ (3.140,93 ຕື້ກີບ). ໃນນີ້ສິນເຊື່ອຢູ່ເມືອງເປົ້າໝາຍ 2.079,44 ຕື້ກີບ, ບ້ານເຮັດທົດລອງ 3 ສ້າງ 295,45 ຕື້ກີບ, ຈຸດສຸມລັດຖະບານ-ທ້ອງຖິ່ນ 331,45 ຕື້ກີບ ແລະ ໂຄງການຜະລິດເປັນສິນຄ້າ 429,15 ຕື້ກີບ.

## 4. ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ

### 4.1. ການເຄື່ອນໄຫວຊຳລະສະສາງ

ການຊຳລະສະສາງດ້ວຍແຊັກຜ່ານສູນຊຳລະສະສາງໃນເດືອນນີ້ມີ ຈຳນວນ 3.294 ສະບັບ ຫຼຸດລົງ 0,66% ເປັນເງິນຈຳນວນ 1.899,32 ຕື້ກີບ ເພີ່ມຂຶ້ນ 23,40% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີ ຈຳນວນ 150 ຄັ້ງ ຫຼຸດລົງ 10,71% ເມື່ອທຽບໃສ່ເດືອນຜ່ານມາ, ມີມູນຄ່າການໂອນ 602,14 ຕື້ກີບ

ຫຼຸດລົງ 18,13% ເມື່ອທຽບໃສ່ເດືອນຜ່ານມາ; ສຳລັບການໂອນເງິນຜ່ານລະບົບຊຳລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 25/08-24/09/2018 ມີຈຳນວນ 15.851 ຄັ້ງ ລາຍລະອຽດມີດັ່ງນີ້:

– **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 15.512 ຄັ້ງ ມີມູນຄ່າການໂອນ 3.792,77 ຕື້ກີບ ຫຼຸດລົງ 20,06% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 4.726 ຄັ້ງ. ໃນນັ້ນມີ ຜູ້ໃຊ້ບໍລິການທີ່ເຮັດທຸລະກຳ 44 ແຫ່ງ;

– **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 339 ຄັ້ງ ມີມູນຄ່າການໂອນ 439,34 ຕື້ກີບ ເພີ່ມຂຶ້ນ 21,22% ທຽບໃສ່ເດືອນຜ່ານມາ.

**4.2. <u>ການຊື້-ຂາຍພັນທະບັດ</u>**

– ໃນເດືອນ 09/2018 ພັນທະບັດກະຊວງການເງິນໄດ້ມີການຈຳໜ່າຍພັນທະບັດບ້ວງລະດົມທຶນຜ່ານ ທຫລ ຈຳນວນ 25 ຕື້ກີບ. ໃນນັ້ນ, ຈຳໜ່າຍໃຫ້ຫ້ອງການກອງທຶນປະກັນສັງຄົມ (ພາກລັດຖະກອນ) ຈຳນວນ 10 ຕື້ກີບ, ຫ້ອງການກອງທຶນປະກັນສັງຄົມ (ພາກວິສາຫະກິດ) ຈຳນວນ 10 ຕື້ກີບ ແລະ ລັດວິສາຫະກິດຫວຍພັດທະນາລາວ ຈຳນວນ 5 ຕື້ກີບ ແລະ ໄຖ່ຖອນພັນທະບັດ ຈຳນວນ 80 ຕື້ກີບ. ໃນນັ້ນ, ໄຖ່ຖອນທະນະບັດໃຫ້ຫ້ອງການກອງທຶນປະກັນສັງຄົມ (ພາກລັດຖະກອນ) ຈຳນວນ 10 ຕື້ກີບ, ຫ້ອງການກອງທຶນປະກັນສັງຄົມ (ພາກວິສາຫະກິດ) ຈຳນວນ 5 ຕື້ກີບ, ລັດວິສາຫະກິດຫວຍພັດທະນາ ຈຳນວນ 5 ຕື້ກີບ, ກອງທຶນປົກປ້ອງຜູ້ຝາກເງິນ ຈຳນວນ 10 ຕື້ກີບ ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຈຳນວນ 50 ຕື້ກີບ;

– ພັນທະບັດຂອງກະຊວງການເງິນມີຍອດເຫຼືອທັງໝົດ 3 ບ້ວງ ມູນຄ່າ 5.491,70 ຕື້ກີບ ແລະ 65 ລ້ານໂດລາ (ບ້ວງລະດົມທຶນ ທທກ ໂດຍກົງ 24 ຕື້ກີບ ແລະ 65 ລ້ານໂດລາ, ພັນທະບັດບ້ວງລ້າງໜີ້ 2.573 ຕື້ກີບ, ບ້ວງລະດົມທຶນຈາກ ທທກ ປະມູນຜ່ານ ທຫລ 2.894,70 ຕື້ກີບ);

– ສຳລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 09/2018 ບໍ່ມີການຈຳໜ່າຍ, ປັດຈຸບັນຍັງມີຍອດເຫຼືອພັນທະບັດບໍ່ທັນໄຖ່ຖອນທັງໝົດ 404 ລ້ານໂດລາສະຫະລັດ.

**5. <u>ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>**

ດັດຊະນີຕະຫຼາດຫຼັກຊັບລາວໃນເດືອນນີ້ປິດຢູ່ທີ່ 879,75 ຈຸດ ເພີ່ມຂຶ້ນ 0,04% ເມື່ອທຽບໃສ່ເດືອນຜ່ານມາ ແລະ ຫຼຸດລົງ 11,88% ເມື່ອທຽບໃສ່ດັດຊະນີທ້າຍປີຜ່ານມາ, ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 1,34 ລ້ານກວ່າຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 5,78 ຕື້ກວ່າກີບ ຫຼຸດລົງ 7,94% ທຽບໃສ່ເດືອນຜ່ານມາ, ໂດຍເປັນຜູ້ລົງທຶນຕ່າງປະເທດ ຊື້-ຂາຍສະເລ່ຍກວມເອົາ 67,98% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດເພີ່ມຂຶ້ນຂອງດັດຊະນີ ຕລຊລ ແມ່ນຍ້ອນການປັບຕົວເພີ່ມຂຶ້ນຂອງລາຄາຮຸ້ນ EDL-Gen ກວມເອົາ 52,67% ຂອງມູນຄ່າການຊື້-ຂາຍທັງໝົດໃນເດືອນນີ້.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 5.600 ກີບ/ຮຸ້ນ ຫຼຸດລົງ 100 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 541.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,03 ຕື້ກວ່າກີບ ຫຼຸດລົງ 40,57% ເມື່ອທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 4.300 ກີບ/ຮຸ້ນ ເພີ່ມຂຶ້ນ 50 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 273.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,17 ຕື້ກວ່າກີບ ເພີ່ມຂຶ້ນ 11,73% ເມື່ອທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 8.000 ກີບ/ຮຸ້ນ ຫຼຸດລົງ 300 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ ແລະ ມີປະລິມານຊື້-ຂາຍທັງໝົດ 100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 8 ແສນກີບ ຫຼຸດລົງ 91,11% ເມື່ອທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍປິດຕົວຢູ່ທີ່ລະດັບ 1.600 ກີບ/ຮຸ້ນ ຫຼຸດລົງ 50 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,58 ລ້ານກີບ ຫຼຸດລົງ 39,79% ທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດສຸວັນນີໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 1.600 ກີບ/ຮຸ້ນ ຫຼຸດລົງ 200 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນຜ່ານມາ ແລະ ມີປະລິມານຊື້-ຂາຍທັງໝົດ 2.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,61 ລ້ານກີບ ເພີ່ມຂຶ້ນ 95,85% ທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດພູສີກໍ່ສ້າງ ມະຫາຊົນ (PCD) ມີລາຄາຊື້-ຂາຍປິດຕົວຢູ່ລະດັບເກົ່າຄື: 1.200 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,20 ລ້ານກີບ ຫຼຸດລົງ 37,82% ເມື່ອທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດຊີມັງລາວ (LCC) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 2.000 ກີບ/ຮຸ້ນ ຫຼຸດລົງ 100 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນຜ່ານມາ ແລະ ມີປະລິມານຊື້-ຂາຍທັງໝົດ 8.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 17,77 ລ້ານກີບ ຫຼຸດລົງ 5,21% ເມື່ອທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດມະຫະທຶນເຊົ່າສິນເຊື່ອ ມະຫາຊົນ (MHTL) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 3.050 ກີບ/ຮຸ້ນ, ມີປະລິມານຊື້-ຂາຍທັງໝົດ 517.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,54 ຕື້ກວ່າກີບ.

**6. <u>ວຽກງານອື່ນໆ</u>**

– ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ: ສໍາເລັດການອອກໃບອະນຸຍາດສ້າງຕັ້ງທະນາຄານ ໄຊງ່ອນ-ຮ່າໂນ້ຍ ລາວ ຈໍາກັດ ສາຂາສະຫວັນນະເຂດ; ສໍາເລັດການລົງກວດກາທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປະຈໍາປີ 2018; ສໍາເລັດການອອກແຈ້ງການທົ່ວລະບົບກ່ຽວກັບການເພີ່ມທະວີ ແລະ ເອົາໃຈໃສ່ໃນການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອ ເພື່ອແກ້ໄຂຜົນເສຍຫາຍຈາກໄພທໍາມະຊາດ ແລະ ພະຍາດລະບາດ; ສໍາເລັດການສ້າງຫຼັກສູດຝຶກອົບຮົມໄລຍະສັ້ນ ກ່ຽວກັບວຽກງານບາເຊວໃນຫົວຂໍ້: ການຄຸ້ມຄອງທະນາຄານທຸລະກິດ ຕາມມາດຕະຖານບາເຊວ ແລະ ການຈັດຕັ້ງປະຕິບັດການພັດທະນາການຄຸ້ມຄອງທະນາຄານທຸລະກິດ ຕາມມາດຕະຖານບາເຊວ 2; ອະນຸມັດໃຫ້ສະຖາບັນການເງິນທີ່ຮັບເງິນຝາກ 02 ແຫ່ງ (ສກຈຮ ເພື່ອພັດທະນາແມ່ຍິງ ແລະ ຄອບຄົວ ແລະ ສກຈຮ ນະຄອນຫຼວງ) ຂະຫຍາຍໜ່ວຍບໍລິການ ຢູ່ 4 ເມືອງ (ເມືອງ ໂພນໂຮງ, ເມືອງ ເຟືອງ ແຂວງວຽງຈັນ, ເມືອງໜອງບົກ ແລະ ເມືອງ ຫີນບູນ ແຂວງຄໍາມ່ວນ);

– ວຽກງານຄຸ້ມຄອງຫຼັກຊັບ: ສໍາເລັດການເປີດພິທີຊື້-ຂາຍຮຸ້ນຄັ້ງທໍາອິດ ແລະ ຈົດທະບຽນຢ່າງເປັນທາງການຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ແລະ ບໍລິສັດ ລາວອາໂກຣເທັກ; ສໍາເລັດການລົງກວດກາກັບທີ່ ບໍລິສັດຫຼັກຊັບລ້ານຊ້າງ ມະຫາຊົນ ປະຈໍາປີ 2018; ສໍາເລັດການຄົ້ນຄວ້າການສະເໜີຂໍອອກຈໍາໜ່າຍຮຸ້ນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ ຂອງບໍລິສັດເປົ້າໝາຍ 01 ແຫ່ງ;

– ສໍາເລັດການສະຫຼຸບການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ, ແຜນການ 6 ເດືອນທ້າຍປີ 2018 ແລະ ທິດທາງແຜນການປີ 2019;

– ສໍາເລັດການຮັບຮອງນິຕິກໍາຕ່າງໆຄື: ຂໍ້ຕົກລົງວ່າດ້ວຍ ການກໍານົດລະຫັດຫຼັກຊັບ ຢູ່ ສປປ ລາວ ແລະ ຂໍ້ຕົກລົງວ່າດ້ວຍຕົວແທນຜູ້ຖືຮຸ້ນກູ້.

## ພາກທີ II
## ວຽກງານຈຸດສຸມໃນເດືອນຕໍ່ໄປ

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ, ຄວບຄຸມປະລິມານເງິນ ແລະ ຮັບປະກັນລະບົບການຊໍາລະສະສາງໃຫ້ຄ່ອງຕົວ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ, ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນໃຫ້ຢູ່ໃນຂອບເຂດທີ່ກຳນົດໄວ້, ໃນນັ້ນເອົາໃຈໃສ່ເປັນພິເສດຕິດຕາມການເຄື່ອນໄຫວຂອງຮ້ານແລກປ່ຽນເງິນຕາຢ່າງໃກ້ຊິດ, ຄວບຄຸມປັດໃຈຕ່າງໆທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສຳຮອງເງິນຕາຕ່າງປະເທດໃຫ້ໄດ້ຕາມແຜນທີ່ກຳນົດໄວ້;
- ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນຳໃຊ້ເງິນກີບ ແລະ ການຊໍາລະໂດຍບໍ່ໃຊ້ເງິນສົດ, ເກັບກຳສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;
- ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບ, ຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ທັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ກຳນົດອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ຕິດຕາມການປ່ອຍສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ເສຍເກີນ 3%;
- ສືບຕໍ່ປັບປຸງນິຕິກຳຈຳນວນໜຶ່ງເປັນຕົ້ນ: ກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ); ດຳລັດວ່າດ້ວຍຄັງສຳຮອງເງິນຕາຕ່າງປະເທດຂອງລັດ; ລັດຖະບັນຍັດວ່າດ້ວຍການລົບລ້າງຄ່າທຳນຽມການຂາຍຮຸ້ນ, ການຫຼຸດອາກອນກຳໄລ ແລະ ຄ່າທຳນຽມຄ່າບໍລິການທີ່ຕິດພັນກັບຂະແໜງຫຼັກຊັບ; ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງລະບົບໂປຣແກຣມ ລະບົບບໍລິຫານຂໍ້ມູນທາງການເງິນຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ (MIS); ມາດຕະການຕໍ່ການລະເມີດລະບຽບວ່າດ້ວຍ ການເປີດເຜີຍຂໍ້ມູນຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ;
- ສືບຕໍ່ກະກຽມຮອບດ້ານສຳລັບການສະເຫຼີມສະຫຼອງວັນສ້າງຕັ້ງ ທະນາຄານແຫ່ງ ສປປ ລາວ ຄົບຮອບ 50 ປີ ໃນວັນທີ 4-6 ຕຸລາ 2018;
- ສືບຕໍ່ກະກຽມກອງປະຊຸມ ຄື: ❶ ກອງປະຊຸມຄະນະຄົ້ນຄວ້ານິຕິກຳຄຸ້ມຄອງວຽກງານເງິນຄຣິບໂຕ; ❷ ຈັດກອງປະຊຸມປຶກສາຫາລືເພື່ອກຳນົດແຜນຍຸດທະສາດໃນການຈັດຕັ້ງປະຕິບັດວຽກງານ ຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ແລະ ❸ ກອງປະຊຸມເຜີຍແຜ່ຄວາມຄືບໜ້າການເຊື່ອມໂຍງ ຂອງຂະແໜງການທະນາຄານ ພາຍໃຕ້ຂອງ WTO ໃນທີ່ວລະບົບທະນາຄານ;
- ພິທີເປີດນຳໃຊ້ໂປຼແກຼມຕະຫຼາດ ລະຫວ່າງ ທະນາຄານ (Interbank);
- ກະກຽມສະຫຼຸບແຜນເງິນຕາປີ 2018 ແລະ ທິດທາງແຜນການປີ 2019 ເພື່ອລາຍງານລັດຖະບານ ແລະ ຄະນະກຳມະທິການຂອງສະພາແຫ່ງຊາດ;
- ກະກຽມເປີດສົກຮຽນໃໝ່ສົກປີ 2018-2019 ພ້ອມທັງຈັດປະຖົມນິເທດໃຫ້ແກ່ນັກສຶກສາໃໝ່ຂອງ ສະຖາບັນການທະນາຄານ;
- ສືບຕໍ່ສະຫຼຸບ, ສັງລວມການກຳນົດຕຳແໜ່ງງານຢູ່ ທຫລ;
- ສືບຕໍ່ປະສານງານ ແລະ ດຳເນີນການເຈລະຈາສັດສ່ວນການຖືຮຸ້ນກັບບໍລິສັດ China Union Pay ໂດຍການຫັນໂຄງການນຳໃຊ້ບັດທະນາຮ່ວມກັນໄປເປັນນິຕິບຸກຄົນ;

- ສືບຕໍ່ຮ່າງຍຸດທະສາດການເຂົ້າເຖິງທາງການເງິນຂອງ ສປປ ລາວ ໄລຍະ 8 ປີ (2018-2025);
- ຕິດຕາມການແກ້ໄຂບັນຫາບໍລິສັດ PS ຊຶ່ງລໍຖ້າຂະບວນການຕັດສິນຂອງໄອຍະການນະຄອນຫຼວງວຽງຈັນ;
- ສືບຕໍ່ວຽກງານປ້ອງກັນເວນຍາມຮັກສາຄວາມປອດໄພອາຄານສໍານັກງານໃຫ້ມີຄວາມສະຫງົບປອດໄພ.

ຮັກສາການ ຜູ້ອໍານວຍການທະນາຄານແຫ່ງ ສປປ ລາວ

ຜູ້ອໍານວຍການ

ສອນໄຊ ສິດພະໄຊ

**ສົ່ງ:**
- ຄະນະຜູ້ວ່າການ ທຫລ.
- ຜູ້ຊ່ວຍຜູ້ວ່າການ ທຫລ.
- ຫ້ອງວ່າການສູນກາງພັກ.
- ກົມຄົ້ນຄວ້າສັງລວມ, ສໍານັກງານປະທານປະເທດ.
- ກົມຄົ້ນຄວ້າ-ສັງລວມ, ຫສນຍ.
- ຫ້ອງການກະຊວງແຜນການ ແລະການລົງທຶນ.
- ຫ້ອງການກະຊວງການເງິນ.
- ຄະນະກໍາມະທິການແຜນການການເງິນແລະການກວດສອບສະພາແຫ່ງຊາດ.
- ບັນດາກົມ ແລະທຽບເທົ່າກົມພາຍໃນທຫລ.
- ຄະນະຫ້ອງການທຫລ.
- ສໍາເນົາ.